MINNESOTA
FRONTLINE WORKER PAY

# ການຈ່າຍເງິນໃຫ້ພະນັກງານແຖວໜ້າຂອງລັດມິນນິໂຊຕາ

## ກ່ຽວກັບເງິນນີ້

ເພື່ອຂອບໃຈຊາວມິນນິໂຊຕາຜູ້ທີ່ເຮັດວຽກແຖວໜ້າໃນຊ່ວງເວລາສຸກເສີນຂອງພະຍາດ COVID-19 ຜູ້ວ່າການລັດ Tim Walz ໄດ້ລົງນາມໃນກົດໝາຍໃນວັນທີ 29 ເມສາ 2022, ໃຫ້ພະນັກງານທີ່ເຮັດວຽກແຖວໜ້າເຫຼົ່ານັ້ນສາມາດສະໝັກຂໍເງິນຄ່າພະນັກງານແຖວໜ້າ. ລາຍລະອຽດໂຄງການ, ລວມທັງຂັ້ນຕອນການສະໝັກ ແລະກຳນົດເວລາ, ແມ່ນຢູ່ອອນໄລນ໌ທີ່ frontlinepay.mn.gov. ເຂົ້າເບິ່ງເວັບໄຊທ໌ເພື່ອລົງທະບຽນເພື່ອຮັບອັບເດດທາງອີເມລກ່ຽວກັບການຈ່າຍຄ່າຈ້າງພະນັກງານແຖວໜ້າຂອງລັດມິນນິໂຊຕາ.



## ໃຜມີສິດໄດ້ຮັບ

ໃນເບື້ອງຕົ້ນ ຜູ້ສະຫມັກທີ່ມີສິດໄດ້ຮັບຕ້ອງມີສອງພາກສ່ວນ: ຂໍ້ກຳນົດການເຮັດວຽກແລະພາກສ່ວນວຽກ.

## ຂໍ້ກຳນົດການເຮັດວຽກ

ເພື່ອໃຫ້ມີສິດໄດ້ເງິນໃຫ້ພະນັກງານແຖວໜ້າ, ຜູ້ສະໝັກ:

- ຕ້ອງໄດ້ເຮັດວຽກຢ່າງໜ້ອຍ 120 ຊົ່ວໂມງໃນລັດມິນນິໂຊຕາໃນບ່ອນວຽກຂະແໜງແຖວໜ້າໜຶ່ງຫຼືຫຼາຍບ່ອນ. ລະຫວ່າງວັນທີ 15 ມີນາ 2020 ແລະ ວັນທີ 30 ມິຖຸນາ 2021;
- ສຳລັບຊົ່ວໂມງເຮັດວຽກໃນໄລຍະເວລານີ້ ຜູ້ສະຫມັກຕ້ອງ –
  - ເຮັດວຽກທາງໄກທາງໂທລະຄົມບໍ່ໄດ້ເນື່ອງຈາກລັກສະນະຂອງວຽກຂອງບຸກຄົນນັ້ນ ແລະ
  - ເຮັດວຽກຢ່າງໃກ້ຊິດກັບຄົນທີ່ບໍ່ໄດ້ຢູ່ເຮືອນດຽວກັບເຂົາເຈົ້າ;
- ຕ້ອງມີຄຸນສົມບັດເລື່ອງລາຍໄດ້ຢ່າງໜ້ອຍໜຶ່ງປີພາສີໃນປີ 2020 ຫຼື 2021 –
  - ພະນັກງານທີ່ມີຄວາມຮັບຜິດຊອບດູແລຄົນເຈັບ COVID-19 ໂດຍກົງ ຈະຕ້ອງມີລາຍໄດ້ລວມທີ່ປັບແລ້ວ* ໜ້ອຍກວ່າ $350,000 ສຳລັບຜູ້ຍື່ນເສຍພາສີທີ່ແຕ່ງງານທີ່ຍື່ນຮ່ວມກັນ, ຫຼືໜ້ອຍກວ່າ $175,000 ສຳລັບຜູ້ຍື່ນເສຍພາສີອື່ນໆ ແລະ
  - ສຳລັບພະນັກງານໃນອາຊີບທີ່ບໍ່ມີຄວາມຮັບຜິດຊອບໃນການດູແລຄົນເຈັບ COVID-19 ໂດຍກົງ, ລາຍໄດ້ລວມທີ່ປັບແລ້ວ* ຈຳກັດທີ່ $185,000 ສຳລັບຜູ້ຍື່ນເສຍພາສີທີ່ແຕ່ງງານທີ່ຍື່ນຮ່ວມກັນ, ຫຼື $85,000 ສຳລັບຜູ້ຍື່ນເສຍພາສີອື່ນໆ ; ແລະ
- ຕ້ອງບໍ່ໄດ້ຮັບເງິນອຸດໜູນປະກັນໄພການຫວ່າງງານເປັນເວລາຫຼາຍກວ່າ 20 ອາທິດ ບົນພື້ນຖານການໄລ່ເວລາສະສົມໃນອາທິດລະຫວ່າງວັນທີ 15 ມີນາ 2020 ແລະ ວັນທີ 26 ມິຖຸນາ 2021.

**ອ່ານເພີ່ມກ່ຽວກັບລາຍໄດ້ລວມທີ່ປັບແລ້ວ: irs.gov/e-file-providers/definition-of-adjusted-gross-income.*

MINNESOTA

ພຶດສະພາ 2022

## ພາກສ່ວນວຽກ

1. ການບໍລິການອາຄານ ລວມທັງການບຳລຸງຮັກສາ, ເຮັດສະອາດ ແລະ ຄວາມປອດໄພ;
2. ການດູແລເດັກ;
3. ສານ ແລະ ບ່ອນຂັງ;
4. ຜູ້ຕອບໃຫ້ບໍລິການພະຍາບານສຸກເສີນ;
5. ການບໍລິການອາຫານ, ລວມທັງການຜະລິດ, ການປຸງແຕ່ງ, ການກະກຽມ, ຂາຍແລະການຈັດສົ່ງ;
6. ບໍລິການຂົນສົ່ງທາງບົກ ແລະ ທາງອາກາດ;
7. ການດູແລສຸຂະພາບ;
8. ການດູແລໄລຍະຍາວແລະການດູແລຢູ່ບ້ານ;
9. ການຜະລິດ;
10. ສາທາລະນະສຸກ, ການບໍລິການສັງຄົມ ແລະ ການບໍລິການດ້ານລະບຽບການ;
11. ການຂົນສົ່ງສາທາລະນະ;
12. ການຂາຍເຄື່ອງ, ລວມທັງການຂາຍອື່ນ, ການສົ່ງເຄື່ອງຂອງຕາມສັນຍາ, ການແຈກຢາຍແລະການຈັດສົ່ງ;
13. ໂຮງຮຽນ, ລວມທັງໂຮງຮຽນ charter, ໂຮງຮຽນຂອງລັດແລະການສຶກສາຊັ້ນສູງ;
14. ທີ່ພັກເຊົາຊົ່ວຄາວ ແລະໂຮງແຮມ; ແລະ
15. ບ່ອນຟື້ນຟູເພື່ອວິຊາຊີບ.

## ສະໝັກຢູ່ໃສ

ຫຼັງຈາກໃບສະໝັກພ້ອມແລ້ວ, ພະນັກງານທີ່ມີຄຸນສົມບັດຈະມີເວລາ 45 ວັນເພື່ອສະໝັກຂໍເງິນໃຫ້ພະນັກງານທີ່ເຮັດວຽກແຖວໜ້າ ສະຫມັກໄດ້ທີ່ frontlinepay.mn.gov. ໄປຢ້ຽມຢາມຫນ້າເວັບສໍາລັບຂໍ້ມູນທີ່ເປັນປະໂຫຍດ, ເຊັ່ນ ຄໍາຕອບຄໍາຖາມທີ່ຖາມເລື້ອຍໆ, ໃບລາຍງານຂໍ້ມູນຂ່າວສານໃນຫຼາຍພາສາ, ວິດີໂອສັ້ນໆແລະອື່ນໆອີກ.

## ການຊ່ວຍເຫຼືອການອງສະຫມັກ

ຫຼັງຈາກທີ່ຄໍາຮ້ອງສະຫມັກກຽມພ້ອມແລ້ວ, ຈະມີສູນກາງໂທແລະຊ່ວຍເຫຼືອໃຫ້ຄວາມຊ່ວຍເຫຼືອຜູ້ສະຫມັກໃນຫຼາຍພາສາ.

## ການຈ່າຍເງິນ

ຫຼັງຈາກການທົບທວນແລະກວດສອບຄໍາຮ້ອງສະຫມັກ, ແລະໄລຍະເວລາ 15 ມື້ສໍາລັບກວດສອບຂໍ້ໂຕ້ແຍ້ງໃບສະຫມັກທີ່ຖືກປະຕິເສດແລ້ວ, ຈະໄດ້ຕັດສິນອອກບັນຊີລາຍຊື່ສຸດທ້າຍຂອງຜູ້ສະຫມັກທີ່ມີສິດໄດ້ຮັບເງິນ. ຜູ້ສະໝັກແຕ່ລະຄົນທີ່ມີສິດໄດ້ຮັບເງິນ ຈະໄດ້ຮັບເງິນເທົ່າກັນ. ໃບສະຫມັກທຸກອັນຈະໄດ້ຮັບການກວດສອບແລະໃນເວລາດຽວກັນ ແລະການຈ່າຍເງິນຈະຖືກສົ່ງຕໍ່ໄປໃຫ້ຈ່າຍພ້ອມກັນ.

*ແຈ້ງການ: ໃບປິວນີ້ແມ່ນບົດສະຫຼຸບສັ້ນໆຂອງກົດໝາຍມິນນີໂຊຕາ. ມັນມີຈຸດປະສົງເປັນຄູ່ມື ແລະບໍ່ໄດ້ໃຊ້ເປັນກົດຫມາຍແທນກົດຫມາຍລັດຖະບັນຍັດຂອງລັດ ມິນນີໂຊຕາກ່ຽວກັບເງິນໃຫ້ພະນັກງານແຖວຫນ້າ.*